# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 23 ມີນາ 2025 (3-23-2025)

---

## ໝາຍສຳຄັນແຫ່ງການຈັດຕຽມຂອງພຣະອົງ

**ຈຸດສຳຄັນໃນບົດຮຽນ:** ພຣະເຢຊູຕອບສນອງຄວາມຈຳເປັນໃນຊີວິດຂອງພວກເຮົາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຄເຣກ ແຣນດໍ (Craig Randall) ຂັບລົດບັນທຸກຂີ້ເຫຍື້ອໃນເມືອງ ພີໂບດີ (Peabody), ລັດ ແມັດແຈັດຊູແຊັດ (Massachusetts). ມື້ນຶ່ງ, ລາວສັງເກດເຫັນຈອກເຄື່ອງດື່ມຂອງເວັນດີ (Wendy) ໃນຖັງຂີ້ເຫຍື້ອທີ່ມີສະຕິກເກີເຣື່ອງການແຂ່ງຂັນ. ໂດຍໄດ້ລາງວັນແຊນວິດໄກ່ໃນອາທິດກ່ອນ, ແຣນດໍ ໄດ້ກວດເບິ່ງມັນຫວັງວ່າຈະໄດ້ມັນຝຣັ່ງທອດຫຼືເຄື່ອງດື່ມ. ແທນທີ່ລາວໄດ້ແກະເອົາສະຕິກເກີທີ່ມີມູນຄ່າ 200,000 ໂດລາເພື່ອກໍ່ສ້າງເຮືອນໃໝ່. ຄເຣກ ແຣນດໍ ບໍ່ໄດ້ຊອກຫາທີ່ຈະໄດ້ຮັບເງິນ 200,000 ໂດລາເມື່ອລາວລອກຂ້າງຫຼັງຂອງສະຕິກເກີ, ແຕ່ລາວໄດ້ຮັບຫຼາຍກ່ວາທີ່ລາວຄາດຫວັງ. ເປັນສິ່ງດຽວກັນເປັນຄວາມຈິງສຳລັບພວກເຮົາໃນເວລາທີ່ມາກັບການນຳເອົາຄວາມຈຳເປັນຂອງພວກເຮົາໄປຫາພຣະເຢຊູ. ພຣະອົງອາດຈະບໍ່ໃຫ້ສິ່ງທີ່ພວກເຮົາຄິດວ່າພວກເຮົາຈຳເປັນ, ແຕ່ພວກເຮົາສາມາດແນ່ໃຈວ່າພຣະເຢຊູຈະໃຫ້ພວກເຮົາຢ່າງແທ້ຈິງສິ່ງທີ່ພວກເຮົາຈຳເປັນໃນເວລາທີ່ພວກເຮົາສແວງຫາພຣະອົງໃນຊີວິດຂອງພວກເຮົາ. ວັນນີ້, ພວກເຮົາຈະໄດ້ເຫັນການອັສຈັນອີກຢ່າງນຶ່ງທີ່ບັນທຶກໄວ້ໃນຂ່າວປະເສີດ. ຄວາມສຳຄັນຂອງການອັສຈັນນີ້ໄດ້ກາຍເປັນຈຸດສຳຄັນສຳລັບຜູ້ທີ່ຕິດຕາມພຣະເຢຊູ, ໂດຍສະເພາະຜູ້ທີ່ຢູ່ໃກ້ຊິດກັບພຣະອົງ. ເປັນບົດຮຽນທີ່ສຳຄັນໃນການເຂົ້າໃຈວິທີທີ່ພຣະເຢຊູຕອບສນອງຄວາມຈຳເປັນຂອງພວກເຮົາ. ໃຫ້ເຮົານັ່ງຢູ່ເທິງເນີນພູກັບພຣະເຢຊູເພື່ອຈະເຫັນສິ່ງທີ່ເຮົາຈະສາມາດຮຽນຮູ້ໄດ້.

*ປຶ້ມຫຼືຮູບເງົາເຣື່ອງໃດທີ່ສ້າງແຮງບັນດານໃຈໃຫ້ທ່ານມີຄວາມອົດທົນຫຼືຄວາມກ້າຫານຂອງຕົວລະຄອນ?*

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### <u>ສຶກສາພຣະຄັມພີ</u>

### 1. ໂຢຮັນ 6:1-5

*1. ຫຼັງຈາກນັ້ນພຣະເຢຊູໄດ້ສະເດັດຂ້າມທະເລສາບຄາລີເລ ຄືທະເລຕີເບເຣັຽ. 2. ປະຊາຊົນເປັນຈຳນວນຫຼວງຫຼາຍຕິດຕາມພຣະອົງໄປ ເພາະເຂົາໄດ້ເຫັນໝາຍສຳຄັນທີ່ພຣະອົງຊົງເຮັດໃຫ້ແກ່ຄົນເຈັບປ່ວຍ. 3. ພຣະເຢຊູໄດ້ສະເດັດຂຶ້ນໄປຍັງພູແລະປະທັບນັ່ງລົງທີ່ນັ້ນກັບພວກສາວົກຂອງພຣະອົງ. 4. ຂນະນັ້ນໃກ້ຈະເຖິງປັສຄາຊຶ່ງເປັນເທສການຂອງຊາດຢິວແລ້ວ. 5. ຝ່າຍພຣະເຢຊູຊົງເງີຍພຣະພັກເຫັນຄົນຈຳນວນຫຼວງຫຼາຍມາຫາ ພຣະອົງຊົງກ່າວກັບຟີລິບວ່າ, "ພວກເຮົາຈະຊື້ອາຫານທີ່ໃດໃຫ້ຄົນເຫຼົ່ານີ້ກິນ?"*

ນອກເໜືອຈາກການຟື້ນຄືນພຣະຊົນແລ້ວ, ເຣື່ອງຂອງພຣະເຢຊູໃຫ້ອາຫານຄົນຫ້າພັນຄົນນັ້ນເປັນການອັສຈັນອັນນຶ່ງທີ່ໄດ້ບັນທຶກໄວ້ໃນຂ່າວປະເສີດທັງສີ່ເຫຼັ້ມ. ແນ່ນອນ, ຜູ້ຂຽນຂ່າວປະເສີດໄດ້ພິຈາລະນາວ່າເປັນໝາຍສຳຄັນ, ແລະພຣະເຈົ້າຄິດວ່າມັນສຳຄັນຫຼາຍທີ່ພຣະອົງໃຫ້ແຕ່ລະຄົນເລົ່າເຫດການຈາກຄຸນລັກສນະຂອງຕົນເອງ. ໃນພຣະທັມໂຢຮັນ, ພວກເຮົາເຫັນວ່າເຖິງແມ່ນວ່າພຣະເຢຊູໄດ້ຂ້າມທະເລຄາລີເລ (ຂໍ້ 1), ຝູງຊົນຕິດຕາມພຣະອົງ. ເປັນຫຍັງ? ເນື່ອງຈາກວ່າການປິ່ນປົວທາງດ້ານຮ່າງກາຍທີ່ພຣະເຢຊູໄດ້ຕອບສນອງໃຫ້ປະຊາຊົນໃນເຂດຄາລີເລ (ຂໍ້ 2). ແນ່ນອນ, ແມ່ນໃຜທີ່ບໍ່ຢາກຊອກຫາການປິ່ນປົວທີ່ອາດເກີດຂຶ້ນໄດ້, ຫຼືຢ່າງໜ້ອຍກໍມາເບິ່ງສິ່ງທີ່ໄດ້ເກີດຂຶ້ນ? ຖ້ອຍຄຳໄດ້ແຜ່ຂຍາຍຢ່າງຈະແຈ້ງ, ແລະມັນຄຸ້ມຄ່າສຳລັບການເດີນທາງໄປຫາຫຼາຍໆຄົນ. ຝູງຊົນທີ່ໄດ້ຕິດ

ຕາມພຣະເຢຊູໄດ້ອະທິບາຍວ່າ "ຍິ່ງໃຫຍ່" (ຂໍ້ 2). ໂຢຮັນສັງເກດເຫັນວ່າເວລາຂອງປັສຄາໃກ້ເຂົ້າມາແລ້ວ, ດັ່ງນັ້ນຈໍານວນຝູງຊົນແມ່ນເຂົ້າໃຈໄດ້ (ຂໍ້ 4). ແຕ່ສະຖານະການນີ້ແຈ້ງເຣື່ອງບັນຫາ: ມີຄົນເມື່ອຍລ້າຫຼາຍ, ຫິວໂຫຍຢູ່ໃນສະຖານທີ່ທີ່ໂດດດ່ຽວ. ພຣະເຢຊູຮູ້ວ່າການສົ່ງຄົນໄປນັ້ນອາດເຮັດໃຫ້ເກີດອັນຕລາຍຫຼາຍກວ່າຜົນດີ. ດັ່ງນັ້ນພຣະເຢຊູໄດ້ເບິ່ງຝູງຊົນດ້ວຍຄວາມເມດຕາສົງສານເຂົາເຈົ້າກ່ອນຈະຫາທາງອອກ. ການຕັ້ງໝາຍສໍາຄັນນີ້ສະແດງໃຫ້ເຫັນບາງສິ່ງທີ່ໜ້າສັງເກດກ່ຽວກັບການກະທໍາຂອງພຣະເຢຊູ.

- **ພຣະເຢຊູຊົງປະທັບລົງ** (ຂໍ້ 3). ໂດຍການກະທໍາທີ່ງ່າຍໆນີ້, ພຣະເຢຊູໄດ້ສະແດງໃຫ້ເຫັນສິດອໍານາດຂອງພຣະອົງໃນຖານະເປັນຄູສອນ. ໃນທັມມະສາລາໄດ້ຈັດບ່ອນນັ່ງໄວ້ສໍາລັບອາຈານເພື່ອນັ່ງສົນທະນາກ່ຽວກັບຄໍາສັ່ງສອນກັບຜູ້ຄົນ.
- **ພຣະເຢຊູຊົງປະທັບຢູ່ເທິງພູເພື່ອສັ່ງສອນ** (ຂໍ້ 3). ພູເຂົາແມ່ນມີຄວາມສໍາຄັນໃນປະວັດສາດຂອງອິສຣາເອັນ. ຢູ່ເທິງພູທີ່ອັບຣາຮາມນໍາເອົາອີຊາກໄປຖວາຍ (ປຖກ. 22). ຢູ່ເທິງພູເຂົາທີ່ພຣະເຈົ້າໄດ້ເປີດເຜີຍພຣະອົງເອງກັບໂມເຊ (ອພ. 3). ຢູ່ເທິງພູທີ່ພຣະເຈົ້າໄດ້ສະແດງໃຫ້ເຫັນພະລັງອໍານາດຂອງພຣະອົງໃນການປະເຊີນໜ້າຂອງເອລີຢາກັບສາສດາຂອງພະບາອານ? (1 ກະສັດ 18).
- **ພຣະເຢຊູໄດ້ຊົງເລືອກເອົາເວລາງານປັສຄາສໍາລັບໝາຍສໍາຄັນນີ້** (ຂໍ້ 4). ອີກບໍ່ດົນລູກແກະໂຕນຶ່ງຈະຖືກຂ້າເພື່ອລະນຶກເຖິງການຊ່ວຍປະຊາຊົນຂອງພຣະເຈົ້າໃຫ້ພົ້ນຈາກທູດສວັນແຫ່ງຄວາມຕາຍໃນປະເທດເອຢິບ. ຕໍ່ມາໂຢຮັນກໍສະແດງວິທີທີ່ພຣະເຢຊູສະເດັດມາເພື່ອຊ່ວຍປະຊາຊົນຂອງພຣະເຈົ້າຈາກຄວາມຕາຍຕລອດໄປເປັນນິດ.
- **ພຣະເຢຊູວາງແຜນທີ່ຈະລ້ຽງອາຫານປະຊາຊົນຜູ້ທີ່ມາຟັງພຣະອົງ (**ຂໍ້ 5). ພຣະເຢຊູຍັງຕ້ອງການໃຫ້ພວກສາວົກເຂົ້າຮ່ວມໃນສິ່ງທີ່ພຣະອົງກໍາລັງຈະທໍາ. ດັ່ງນັ້ນພຣະອົງຈຶ່ງຖາມຟີລິບວ່າ, "ເຮົາຈະຊື້ອາຫານຢູ່ໃສເພື່ອໃຫ້ຄົນເຫຼົ່ານີ້ກິນ?" (ຂໍ້ 5).

ພຣະເຢຊູໄດ້ຖາມຄໍາຖາມແບບນີ້ເລື້ອຍໆເພື່ອເພີ່ມຄວາມເຊື່ອໃຫ້ປະຊາຊົນຂອງພຣະອົງ. ຈ໋ອດ ມູເລີ (George Müller)ເປັນນັກປະກາດຂ່າວປະເສີດທີ່ດໍາເນີນການທີ່ສູນລ້ຽງເດັກກໍາພ້າຫຼາຍໆແຫ່ງໃນປະເທດອັງກິດໃນສະຕະວັດທີ 19. ຕອນເຊົ້າມື້ນຶ່ງ, ມູເລີໄດ້ພາຍິງສາວຄົນນຶ່ງຊື່ອາບີກາຍເຂົ້າໄປໃນຫ້ອງອາຫານທີ່ຕຽມໄວ້ສໍາລັບອາຫານເຊົ້າແຕ່ບໍ່ມີອາຫານ. ລາວໄດ້ອະທິຖານວ່າ, "ຂ້າແດ່ພຣະບິດາ, ພວກເຮົາຂໍຂອບພຣະຄຸນພຣະອົງສໍາລັບສິ່ງທີ່ພຣະອົງຈະຊົງປະທານໃຫ້ພວກເຮົາໄດ້ຮັບປະທານ." ມີສຽງເຄາະທີ່ປະຕູ, ແລະມັນກໍແມ່ນຄົນເຮັດເຂົ້າຈີ່, ລາວບໍ່ສາມາດນອນຫຼັບໄດ້ເພາະວ່າລາວແນ່ໃຈວ່າພຣະເຈົ້າຕ້ອງການໃຫ້ລາວອົບເຂົ້າຈີ່ແກ່ມູເລີ. ມູເລີເວົ້າກັບເດັກນ້ອຍວ່າ, "ເດັກເອີຍ, ພວກເຮົາບໍ່ພຽງແຕ່ມີເຂົ້າຈີ່ທັມມະດາ, ແຕ່ມີເຂົ້າຈີ່ສົດໆ." ທັນໃດນັ້ນເຂົາເຈົ້າໄດ້ຍິນສຽງເຄາະເທື່ອທີສອງ. ເວລານີ້ແມ່ນຄົນສົ່ງນໍ້ານົມ. ຂນະທີ່ເຂົາໄດ້ກັບອອກໄປ, ລົດແກ່ນົມໄດ້ແລ່ນອອກໄປນອກໂຮງລ້ຽງເດັກກໍາພ້າ, ແລະລາວກໍໄດ້ເອົານົມໃຫ້ເດັກນ້ອຍດື່ມ, ອາຫານກໍ່ແຈກໃຫ້ຈົນຄົບຖ້ວນ. ນີ້ບໍ່ແມ່ນຄັ້ງທໍາອິດຫຼືຄັ້ງສຸດທ້າຍ ມູເລີ ຮູ້ວ່າພຣະເຈົ້າໄດ້ເຫັນຄວາມຈໍາເປັນຂອງຕົນແລະສາມາດຕອບສນອງລາວ. ພຣະເຈົ້າຜູ້ທີ່ຈະລ້ຽງຄົນຫ້າພັນຄົນ, ແລະຜູ້ທີ່ໄດ້ດູແລລູກໆຂອງ ມູເລີ, ກໍຈະຈັດຕຽມສໍາລັບພວກເຮົາເຊັ່ນດຽວກັນ! ພຣະເຢຊູບໍ່ພຽງແຕ່ປາຖນາທີ່ຈະຕອບສນອງຄວາມຕ້ອງການທາງຮ່າງກາຍຂອງເຮົາ, ບໍ່ວ່າຈະຜ່ານທາງອາຫານຫຼືການປິ່ນປົວ, ແຕ່ພຣະເຢຊູຈະໃຊ້ຄວາມຕ້ອງການທາງຮ່າງກາຍເພື່ອສະແດງເຖິງລັກສນະຂອງພຣະອົງໃນຖານະເປັນພຣະບຸດອົງດຽວຂອງພຣະເຈົ້າ. ພຣະອົງເປັນຜູ້ທີ່ສາມາດຕອບສນອງຄວາມຕ້ອງການທັງໝົດຂອງພວກເຮົາ. ຄວາມຕ້ອງການທີ່ຍິ່ງໃຫຍ່ທີ່ສຸດຂອງພວກເຮົານັ້ນ, ແນ່ນອນ, ຄືຄວາມລອດພົ້ນບາບ. ພຣະເຢຊູສະເດັດມາກ່ອນແລະສໍາຄັນທີ່ສຸດຄືເພື່ອຊ່ວຍໃຫ້ພວກເຮົາໄດ້ລອດພົ້ນຈາກຄວາມຜິດບາບ, ໃຫ້ພວກເຮົາໄດ້ຄືນດີກັບພຣະເຈົ້າ.

*ເມື່ອໃດທີ່ທ່ານຮູ້ສຶກວ່າພຣະເຢຊູສັງເກດເຫັນ?*

## 2. ໂຢຮັນ 6:6-11

*6. ທີ່ພຣະອົງຊົງກ່າວຢ່າງນັ້ນກໍເພື່ອຈະລອງໃຈຟີລິບ ເພາະພຣະອົງຊົງຊາບແລ້ວວ່າຈະຊົງເຮັດປະການໃດ. 7. ຟີລິບທູນຕອບພຣະອົງວ່າ, "ອາຫານຣາຄາສອງຮ້ອຍເດນາຣິອົນກໍບໍ່ພໍໃຫ້ທຸກຄົນກິນຜູ້ລະເລັກລະໜ້ອຍດອກ." 8. ສາວົກຜູ້ນຶ່ງຄືອັນເດອານ້ອງຊາຍຂອງຊີໂມນເປໂຕ ໄດ້ທູນພຣະອົງວ່າ, 9. "ຢູ່ທີ່ນີ້ມີເດັກນ້ອຍຄົນນຶ່ງມີເຂົ້າຈີ່ເຮັດດ້ວຍເຂົ້າຟ່າງຫ້າກ້ອນກັບປາສອງໂຕ ແຕ່ສິ່ງນີ້ຈະພໍໄດ້ຢ່າງໃດກັບຄົນຫຼວງຫຼາຍປານນີ້?" 10. ພຣະເຢຊູຊົງສັ່ງວ່າ, "ຈົ່ງໃຫ້ຄົນທັງຫຼາຍນັ່ງລົງເສັຽ" ທີ່ນັ້ນມີຫຍ້າຫຼາຍ ຄົນເຫຼົ່ານັ້ນຈຶ່ງນັ່ງລົງ*

*ນັບແຕ່ຜູ້ຊາຍມີປະມານຫ້າພັນຄົນ. 11. ແລ້ວພຣະເຢຊູຊົງຈັບເຂົ້າຈີ່ນັ້ນ ເມື່ອໂມທະນາພຣະຄຸນແລ້ວກໍຊົງແຈກແກ່ບັນດາຄົນທີ່ນັ່ງຢູ່ນັ້ນ ສ່ວນປາກໍຊົງໃຫ້ເໝືອນກັນຕາມທີ່ເຂົາຕ້ອງການ.*

ເປັນຫຍັງພຣະເຢຊູຈິ່ງຫັນໜ້າໄປຫາຟີລິບດ້ວຍຄຳຖາມຂອງພຣະອົງວ່າເຂົາຈະໄປຊື້ເຂົ້າຈີ່ຢູ່ໃສ? ກ່ອນອື່ນ, ຟີລິບມາຈາກເມືອງເບັດຊາອີດາ, ເຊິ່ງບໍ່ໄດ້ໄກຈາກບ່ອນທີ່ພວກເຂົາຢູ່, ຊຶ່ງໝາຍຄວາມວ່າລາວຈະຄຸ້ນເຄີຍກັບຊັບພະຍາກອນທີ່ມີໃຫ້ແກ່ພວກເຂົາ. ຕາມປົກກະຕິ, ຟີລິບໄດ້ກັບຄືນສູ່ຄວາມກັງວົນທາງດ້ານການເງິນທີ່ລາວມີໃນເວລາທີ່ປະເຊີນໜ້າກັບບັນຫາ. ເຊັ່ນດຽວກັບສາວົກຄົນອື່ນໆ, ຄວາມເຊື່ອຂອງຟີລິບຍັງຄົງຢູ່ຢ່າງແນ່ນອນ. ແຕ່ລາວອາດຈະຄິດສະເລັ່ຽຈຳນວນທັງໝົດຢ່າງໄວວາເພື່ອຈະຫ້າມພຣະເຢຊູໃນກໍລະນີນີ້: "ອາຫານສອງຮ້ອຍເດນາຣີອົນຈະບໍ່ພຽງພໍສຳລັບແຕ່ລະຄົນກິນຜູ້ລະເລັກນ້ອຍ" (ຂໍ້ 7). ຟີລິບໄດ້ເຫັນພຣະເຢຊູເຮັດການອັສຈັນ; ລາວໄດ້ເຫັນພຣະເຢຊູປິ່ນປົວຜູ້ຄົນ, ຂັບໄລ່ຜີປີສາດອອກ, ແລະດັ່ງນັ້ນລາວຈຶ່ງເຫັນຄຳທຳນວາຍທີ່ສຳເລັດ. ແຕ່ເມື່ອປະສົບການຂອງລາວຖືກເປີດເຜີຍ, ແຕ່ຟີລິບໄດ້ຕອບສນອງດ້ວຍການຂາດຄວາມເຊື່ອ, ແທນທີ່ຈະໃຫ້ຄວາມໄວ້ວາງໃຈທີ່ເຕັມບໍລິບູນດ້ວຍຄວາມເຕັມໃຈ ແລະຄວາມສາມາດຂອງພຣະຜູ້ເປັນເຈົ້າໃນການຕອບສນອງ. ເປັນເວລານີ້ທີ່ພວກເຮົາເຫັນການປ່ຽນແປງຂອງສະຖານະການ; ອັນເດອາ (ນ້ອງຊາຍຂອງຊີໂມນເປໂຕ) ເວົ້າວ່າ, "ມີເດັກຊາຍຄົນນຶ່ງຢູ່ທີ່ນີ້ມີເຂົ້າຈີ່ຫ້າກ້ອນແລະປາສອງໂຕ" (ຂໍ້ 9). ເດັກຊາຍຜູ້ນີ້ແມ່ນໃຜ ແລະ ເຮົາອາດຮູ້ຫຍັງແດ່ກ່ຽວກັບລາວແລະການຈັດຫາຂອງລາວ?

- ນັກວິຊາການບາງຄົນເຊື່ອວ່າລາວອາດຈະເປັນເດັກໜຸ່ມນ້ອຍເປັນຜູ້ທີ່ຊ່ອຍຈັດຫາອາຫານຂອງພວກສາວົກ, ເພາະວ່າອັນເດອາຮູ້ບ່ອນທີ່ຈະຊອກຫາລາວ.
- ຊະນິດຂອງເຂົ້າຈີ່ແລະພາສາດັ້ງເດີມໄດ້ຖືກໃຊ້ບັນລະຍາຍແນະນຳເຖິງປາວ່າລາວເປັນຄົນທຸກຍາກ; ເຂົ້າຈີ່ເຮັດດ້ວຍເຂົ້າຟ້າງແມ່ນເປັນເຂົ້າຈີ່ທີ່ບໍ່ເປັນຕາກິນເລີຍ, ເພາະວ່າມັນຈະຫຍາບແລະເອົາໄວ້ໃຊ້ເປັນອາຫານຂອງສັດ. ປາກໍມີຂນາດນ້ອຍກວ່າປົກກະຕິ.

ຈາກທັສນະຂອງຟີລິບ, ຄວາມສາມາດໃນການລ້ຽງຝູງຊົນບໍ່ໄດ້ມີຄວາມໝາຍໃນເວລານີ້ຫຼືເພາະເງິນ. ຈາກທັສນະຂອງ ອັນເດອາ, ຄວາມສາມາດໃນການລ້ຽງອາຫານແມ່ນຍ້ອນການຂາດແຄນຊັບພະຍາກອນເຊັ່ນດຽວກັນ, ແຕ່ຢ່າງໜ້ອຍໃນຕອນນັ້ນລາວສາມາດແນ່ໃຈໄດ້ວ່າພຣະອາຈານຂອງລາວສາມາດລ້ຽງໄດ້. ແຕ່ເມື່ອພຣະເຢຊູເຫັນເດັກຊາຍເອົາອາຫານໃຫ້ແກ່ພວກລູກສິດພຣະອົງຈະສະແດງໃຫ້ເຫັນວ່າເມື່ອພຣະເຈົ້າຢູ່ໃນນັ້ນຈະໜ້ອຍກໍເປັນຫຼາຍ.

*ແມ່ນຫຍັງຄືສ່ວນຂອງເຮົາ ແລະສ່ວນໃດເປັນຂອງພຣະເຈົ້າໃນການເຫັນຄວາມຕ້ອງການທາງດ້ານຮ່າງກາຍຂອງເຮົາ?*

## 3. ໂຢຮັນ 6:12-15

*12. ເມື່ອເຂົາກິນອີ່ມແລ້ວພຣະເຢຊູຊົງບອກພວກສາວົກວ່າ, "ຈົ່ງເກັບເອົາຕ່ອນຫັກທີ່ເຫຼືອນັ້ນເພື່ອບໍ່ໃຫ້ອັນໃດເສັຽ." 13. ເຂົາໄດ້ເກັບເອົາຕ່ອນຫັກທີ່ເຫຼືອຈາກເຂົ້າຈີ່ທີ່ເຮັດດ້ວຍເຂົ້າຟ້າງຫ້າກ້ອນ ຊຶ່ງຄົນທັງຫຼາຍໄດ້ກິນນັ້ນ ໄດ້ເຕັມສິບສອງກະບຸງ. 14. ເມື່ອຄົນທັງຫຼາຍໄດ້ເຫັນໝາຍສຳຄັນທີ່ພຣະອົງໄດ້ຊົງເຮັດນັ້ນ ເຂົາກໍເວົ້າກັນວ່າ, "ຈິງແທ້ທ່ານຜູ້ນີ້ເປັນຜູ້ປະກາດພຣະທັມນັ້ນທີ່ຊົງກຳນົດວ່າຈະມາໃນໂລກ." 15. ເມື່ອພຣະເຢຊູຊົງຊາບວ່າ ເຂົາຈະມາຈັບເອົາໄປແຕ່ງຕັ້ງໃຫ້ພຣະອົງເປັນເຈົ້າແຜ່ນດິນ ພຣະອົງຈຶ່ງສະເດັດອອກໄປຍັງພູເຂົາອີກແຕ່ອົງດຽວ.*

ຫຼັງຈາກພຣະເຢຊູໄດ້ເຮັດການອັສຈັນອັນບໍ່ໜ້າເຊື່ອນີ້, ຜູ້ຄົນເລີ້ມເຫັນແລ້ວວ່າພຣະອົງໄດ້ບັນລຸໝາຍສຳຄັນທີ່ໄດ້ກຳນົດໄວ້ສຳລັບພຣະເມຊີອາທີ່ສັນຍາໄວ້ (ຂໍ້ 14). ແນວໃດກໍຕາມ, ບາງສິ່ງບາງຢ່າງທີ່ກ່ຽວກັບວິທີທີ່ພວກເຂົາໂຕ້ຕອບຊຶ່ງເຮັດໃຫ້ພຣະເຢຊູຖອຍຕົວອອກ. ພວກເຮົາອາດຈະຄິດແຕ່ຢູ່ໃນຈຸດນີ້, ພຣະເຢຊູ, ນີ້ແມ່ນສິ່ງທີ່ທ່ານຕ້ອງການໃຫ້ເກີດຂຶ້ນບໍ? ພຣະເຢຊູບໍ່ຈຳເປັນຕ້ອງມີອານາຈັກໃນໂລກເພື່ອພິສູດສິດອຳນາດຂອງພຣະອົງ, ແລະແນ່ນອນວ່າພຣະອົງບໍ່ໄດ້ມາເພື່ອນຳພາການພິພາກສາ. ການປະຕິເສດຕໍ່ການແຕ່ງຕັ້ງໃຫ້ເປັນກະສັດເທິງແຜ່ນດິນໂລກຂອງພຣະເຢຊູສະແດງໃຫ້ເຫັນວ່າເສັ້ນທາງຂອງພຣະເມຊີອາແມ່ນກ່ຽວກັບໄມ້ກາງແຂນຫຼາຍກວ່າຝູງ

ຊົນ, ກ່ຽວກັບການຟື້ນຄືນຊີວິດຫຼາຍກວ່າອາຫານຄາບທີ່ມະຫັສຈັນ. ດັ່ງນັ້ນ, ແທນທີ່ຈະຍອມຈຳນົນຕໍ່ຄວາມປາຖນາຂອງພວກເຂົາ, "ພຣະອົງໄດ້ກັບຄືນໄປອີກເທື່ອນຶ່ງທີ່ພູເຂົາດ້ວຍພຣະອົງເອງ" (ຂໍ້ 15). ບາງທີພຣະເຢຊູເຫັນວ່າໃຈຂອງຜູ້ຄົນເອົາໃຈໃສ່ໃນສິ່ງທີ່ພຣະອົງສາມາດເຮັດເພື່ອພວກເຂົາຫຼາຍກວ່າທີ່ພຣະອົງຊົງເປັນ. ຈິດໃຈຂອງພວກເຂົາຢູ່ໃນບ່ອນທີ່ຜິດ, ເນັ້ນໃສ່ແຕ່ສິ່ງທີ່ພວກເຂົາຕ້ອງການ, ບໍ່ແມ່ນສິ່ງທີ່ພຣະອົງຄຶດໄວ້ວ່າພວກເຂົາຈຳເປັນ. ການຕອບສນອງຄວາມຕ້ອງການຂອງພວກເຮົາບໍ່ແມ່ນການຕອບສນອງແລະຄວາມປາຖນາຂອງພວກເຮົາ. ແທນທີ່ຈະເປັນ, ພຣະເຢຊູເປັນຜູ້ຊີ້ບອກເຮົາເຖິງຄວາມຕ້ອງການທີ່ຍິ່ງໃຫຍ່ກວ່າຂອງເຮົາເຊິ່ງເປັນສາຍສັມພັນກັບພຣະເຈົ້າ. ຖ້າເຮົາສັດຊື່, ເຮົາກໍເຮັດແບບດຽວກັນກັບຄົນໃນຝູງຄົນນັ້ນ. ພວກເຮົາອາສັຍຢູ່ໃນໂລກຂອງແນວໂນ້ມນີ້. ຖ້າມັນໃຫຍ່ກວ່າ, ໄວກວ່າ, ເຂັ້ມແຂງກວ່າ, ແລະມີຄວາມພໍໃຈຫຼາຍ, ພວກເຮົາພຽງແຕ່ຍຶດໝັ້ນກັບມັນ, ເຖິງແມ່ນວ່າມັນຈະມີຄຸນຄ່າທີ່ຕໍ່າກວ່າພວກເຮົາ. ເຮົາຊອກຫາຄວາມຕ້ອງການທາງຮ່າງກາຍຂອງເຮົາກ່ອນຄວາມຕ້ອງການທາງຈິດວິນຍານ. ເຮົາອາດຄິດວ່າຄວາມເປັນພຣະເຈົ້າຖືກວັດແທກໃນພຣະພອນທາງດ້ານວັດຖຸສິ່ງຂອງຫຼາຍກວ່າ. ເຖິງຢ່າງໃດກໍຕາມ, ເຮົາຍັງຫິວໂຫຍທາງຈິດວິນຍານຢ່າງສິ້ນຫວັງ. ພວກເຮົາໄດ້ເລືອກສິ່ງທີ່ເປັນເສດເຫຼືອຂອງໂລກນີ້ແທນທີ່ຈະເປັນອາຫານແຫ່ງຊີວິດທີ່ບໍ່ເຄີຍສິ້ນສຸດຂອງພຣະຄຸນທີ່ສນອງໃຫ້ຜ່ານທາງພຣະຄຣິດ. ທ່ານເຫັນ, ການລ້ຽງອາຫານແກ່ 5,000ຄົນ ແມ່ນການອັສຈັນອັນທີ່ໃຫຍ່ຫຼວງທີ່ຮຽກຮ້ອງໃຫ້ຄົນເຮົາມີການຂຍາຍຕົວທາງຈິດວິນຍານຫຼາຍກວ່າການອວຍພອນທາງເນື້ອໜັງໃດໆ. ມັນນຳໄປສູ່ຄວາມເຊື່ອທີ່ສອນພວກເຮົາວ່າພຣະເຢຊູຕອບສນອງຄວາມຕ້ອງການຂອງພວກເຮົາໃນເວລາທີ່ມີເຫດເກີດຂຶ້ນ, ແຕ່ພວກເຮົາບໍ່ໄດ້ຍຶດຖືເອົາຄວາມດີແລະການສນອງຂອງພຣະອົງ. ມັນຍັງເປັນຄວາມເຊື່ອທີ່ສອນພວກເຮົາໃຫ້ເພິ່ງພາອາສັຍອຳນາດຂອງພຣະເຈົ້າສຳລັບສິ່ງທີ່ເຮັດໃຫ້ພວກເຮົາເຈັບປວດທີ່ສຸດ. ພະລັງພິເສດອັນດຽວກັນທີ່ປຸ່ນການແຈກເຂົ້າຈີ່ແລະປາໃຫ້ເປັນອາຫານສຳລັບປະຊາຊົນຫ້າພັນກວ່າຄົນແມ່ນພະລັງດຽວກັນທີ່ຍົກພຣະເຢຊູຂຶ້ນຈາກຂຸມຝັງສົບ. ແລະມັນເປັນອຳນາດທີ່ມາຈາກແຫຼ່ງແຫ່ງພຣະຄຸນແລະຄວາມເມດຕາອັນບໍ່ສິ້ນສຸດຂອງພຣະເຈົ້າ; ມັນເປັນພະລັງງານທີ່ຈະຕັ້ງເຈົ້າໃຫ້ເປັນອິສລະ. ໃນການສັນລະເສີນພຣະເຈົ້າທີ່ພຣະອົງຮູ້ວ່າພວກເຮົາຈຳເປັນແທ້ ໆ!

*ເຮົາໄດ້ຮຽນຫຍັງຈາກໝາຍສຳຄັນທີສີ່ນີ້ຈາກພຣະເຢຊູ?*

## ນຳໃຊ້ໃນຊີວິດ

ພຣະເຢຊູຕອບສນອງຄວາມຈຳເປັນໃນຊີວິດຂອງພວກເຮົາ. ຈົ່ງເລືອກເອົາອັນນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຜົນສະທ້ອນ**. ຂຽນຄຳອະທິຖານຂອງການສາລະພາບຕໍ່ພຣະຜູ້ເປັນເຈົ້າ, ຍອມຮັບເວລາທີ່ເຈົ້າໄດ້ສຸມໃສ່ພຽງແຕ່ຄວາມປາຖນາຂອງເຈົ້າແທນທີ່ຈະເຫັນແຕ່ຄວາມຕ້ອງການອັນຍິ່ງໃຫຍ່ທີ່ສຸດຂອງພວກເຮົາທີ່ໄດ້ຖືກສນອງໃຫ້ຢູ່ໃນພຣະຄຣິດແລະການຕອບສນອງຂອງພຣະອົງ.
- **ແບ່ງປັນ**. ຊອກຫາວິທີໃນອາທິດນີ້ເພື່ອດຳເນີນຊີວິດຄ້າຍຄືເດັກນ້ອຍຄົນນັ້ນຈາກຂໍ້ຄວາມທີ່ກ່າວມານີ້ ແລະແບ່ງປັນກັບບາງຄົນໃນສິ່ງທີ່ພຣະເຈົ້າໄດ້ຊົງອວຍພອນເຈົ້າບໍ່ວ່າຈະໃຫຍ່ຫຼືຈະນ້ອຍ. ໃຫ້ຈຳໄວ້ວ່າ, ພຣະເຈົ້າສາມາດເຮັດສິ່ງພຽງເລັກນ້ອຍຂອງພວກເຮົາແລະເຮັດໃຫ້ຫຼາຍໄດ້!
- **ສແວງຫາ**. ໃຊ້ເວລາໃນການອະທິຖານກ່ຽວກັບວິທີສະແດງຄວາມເມດຕາສົງສານ, ດັ່ງທີ່ພຣະເຢຊູໄດ້ຊົງເຮັດບໍ່ແມ່ນເຮັດເພາະໜ້າທີ່ເພາະພຣະພອນ. ອະທິຖານແລ້ວຊອກຫາຄົນທີ່ເຈົ້າສາມາດແບ່ງປັນຂ່າວປະເສີດກັບເຂົາໃນອາທິດນີ້

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ A.P.P**